ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0375/ກປ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

- ອີງຕາມ ກົດໝາຍຂອງສະພາແຫ່ງຊາດ ວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 30/ສພຊ ລົງວັນທີ 19 ກໍລະກົດ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງເຫັນດີ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ທັນວາ 2021.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແນໃສ່ຈັດຕັ້ງປະຕິບັດວຽກງານຍົກປະສິດທິພາບ ຂອງການຄົ້ນຄວ້າວິທະຍາສາດ ໃຫ້ສອດຄ່ອງກັບແນວທາງປ່ຽນແປງໃໝ່ ຂອງພັກ ແລະ ລັດຖະບານ ຕໍ່ວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຂຽນເປັນຕົວອັກສອນຫຍໍ້ວ່າ **"ສກປພ"** ແມ່ນໂຄງປະກອບກົງຈັກ ຂອງກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ປ່າໄມ້ ໃນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ອະນຸລັກ ແລະ ນຳໃຊ້ຊີວະນາໆພັນກະສິກຳ, ປ່າໄມ້, ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເສດຖະກິດຊົນນະບົດ, ຄົ້ນຄວ້າ ແລະ ການຜະລິດແນວພັນກະສິກຳ ແລະ ປ່າໄມ້, ການປຸງແຕ່ງເມັດພັນ ແລະ ຜະລິດຕະພັນກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຄຸນນະພາບ, ຄົ້ນຄວ້າ ການນຳໃຊ້ເຄື່ອງມືກົນຈັກກະສິກຳ ແລະ ເຕັກໂນໂລຊີຫຼັງເກັບກ່ຽວ; ການຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດ ແລະ ທະນາຄານເຊື້ອພັນ ເພື່ອຮັບປະກັນໃຫ້ແກ່ ການຜະລິດກະສິກຳ, ປ່າໄມ້ ແລະ ການພັດທະນາຊົນນະບົດ ຕາມທິດສີຂຽວ ແລະ ສະອາດ ໃຫ້ມີຄວາມຍືນຍົງ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

## ມາດຕາ 3 ໜ້າທີ່

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີໜ້າທີ່ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງເປັນໃຈກາງຄຸ້ມຄອງ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ; ຄົ້ນຄວ້າ ນຳສະເໜີສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ພ້ອມທັງເຜີຍແຜ່ໃຫ້ຂະແໜງການຢ່າງທົ່ວເຖິງ;
3. ຄົ້ນຄວ້າ, ສ້າງແຜນຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບວຽກງານ ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ອະນຸລັກ ແລະ ນຳໃຊ້ຊີວະນາໆພັນ ກະສິກຳ ແລະ ປ່າໄມ້ ເພື່ອສະເໜີລັດຖະມົນຕີ ພິຈາລະນາຮັບຮອງ; ສ້າງແຜນງານ, ແຜນການ ແລະ ໂຄງການຄົ້ນຄວ້າ ແລະ ການຜະລິດແນວພັນພືດ, ແນວພັນສັດ-ສັດນ້ຳ, ແນວພັນໄມ້, ການປຸງແຕ່ງເມັດພັນໃຫ້ໄດ້ຄຸນນະພາບ ເພື່ອຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງສະຖາບັນ ແລະ ສູນຄົ້ນຄວ້າຂອງຕົນ ສະເໜີລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ສຸມທຸກກຳລັງແຮງຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ແນວພັນ ເພື່ອຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ, ມີຜົນຜະລິດສົດ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນປ່ຽນແທນການນຳເຂົ້າ ແລະ ສິນຄ້າສົ່ງອອກສອດຄ່ອງກັບມາດຕະຖານສຸຂານາໄມພືດ ແລະ ສັດ ຂອງປະເທດຄູ່ຄ້າ;
5. ຄົ້ນຄວ້າ ແລະ ຜະລິດແນວພັນເຂົ້າ: ບໍລິສຸດ, ລຸ້ນ 1, ລຸ້ນ 2 ເພື່ອສະໜອງໃຫ້ ຂະແໜງສົ່ງເສີມ, ສູນ, ຊາວກະສິກອນ ແລະ ຜູ້ປະກອບການທີ່ຜະລິດແນວພັນ ນຳໄປຜະລິດ ແລະ ຂະຫຍາຍເປັນເມັດພັນເຂົ້າລຸ້ນ 3 ຫຼື ແນວພັນສົ່ງເສີມ, ພ້ອມທັງຜະລິດ ແລະ ຂະຫຍາຍເມັດພັນເຂົ້າລຸ້ນ 3 ຢູ່ບັນດາສູນຂອງຕົນບ່ອນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ; ຄົ້ນຄວ້າ, ພັດທະນາ ແລະ ຂະຫຍາຍແນວພັນພືດ, ແນວພັນສັດ, ປາ ແລະ ສັດນ້ຳ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການພືດ-ສັດທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
6. ສຶກສາຄົ້ນຄວ້າ, ພັດທະນາແນວພັນໃໝ່, ເຕັກນິກການຂະຫຍາຍພັນພືດດ້ວຍເນື້ອເຍື່ອ, ເຕັກນິກ ແລະ ເຕັກໂນໂລຊີໃໝ່ເພື່ອຍົກຜະລິດຕະພາບ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດກະສິກຳ ແລະ ປ່າໄມ້ ໂດຍນຳໃຊ້ເຄື່ອງມືກະສິກຳທັນສະໄໝ; ຄົ້ນຄວ້າ ການນຳໃຊ້ເຄື່ອງມືກົນຈັກກະສິກຳ, ເຕັກໂນໂລຊີຫຼັງເກັບກ່ຽວ ແລະ ເຕັກນິກການປຸງແຕ່ງຜະລິດຕະພັນກະສິກຳ;
7. ຄຸ້ມຄອງ ຊຸກຍູ້ ສົ່ງເສີມ ແລະ ພັດທະນາ ໂຮງງານ ແລະ ເຄື່ອງຄັດເມັດພັນ, ຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດ ແລະ ທະນາຄານເຊື້ອພັນກະສິກຳ ແລະ ປ່າໄມ້;
8. ສຳຫຼວດເພື່ອສຶກສາ, ຄົ້ນຄວ້າ ແລະ ອະນຸລັກຊີວະນາໆພັນ ກະສິກຳ ແລະ ປ່າໄມ້ ທີ່ເປັນທ່າແຮງໃຫ້ແກ່ການພັດທະນາ ແລະ ນຳໃຊ້ແນວພັນ ໃຫ້ມີຄວາມຍືນຍົງ;
9. ສຶກສາການປ່ຽນແປງຂອງ ສະພາບດິນຟ້າອາກາດ, ສ້າງແຜນທີ່ຄາດຄະເນຄວາມສ່ຽງ ຕໍ່ກັບການເກີດໄພແຫ້ງແລ້ງ, ນ້ຳຖ້ວມ, ສັດຕູພືດ ແລະ ພະຍາດສັດ ລວມທັງຄຳແນະນຳທາງດ້ານອຸຕຸກະສິກຳ, ເຕັກນິກ

ວິຊາການຕ່າງໆ ເພື່ອຊ່ວຍໃຫ້ຊາວກະສິກອນ ສາມາດປັບຕົວຕໍ່ການປ່ຽນແປງຂອງສະພາບພູມອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກໄພທຳມະຊາດ;

10. ຄົ້ນຄວ້າເສດຖະກິດກະສິກຳ-ປ່າໄມ້ ແລະ ຮູບແບບການພັດທະນາຊົນນະບົດໃໝ່ ເພື່ອເປັນຂໍ້ມູນໃຫ້ແກ່ການພັດທະນາກະສິກຳ, ປ່າໄມ້ ແລະ ການພັດທະນາຊົນນະບົດ ແນໃສ່ປະກອບສ່ວນລຶບລ້າງຄວາມທຸກຍາກ ແລະ ການພັດທະນາຊົນນະບົດ ແບບຍືນຍົງ;
11. ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງ ເພື່ອອຳນວຍໃຫ້ແກ່ການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
12. ສັງລວມ, ຄຸ້ມຄອງ, ເຜີຍແຜ່, ແລກປ່ຽນ ແລະ ບໍລິການຂໍ້ມູນຂ່າວສານ ຜົນການຄົ້ນຄວ້າທົດລອງກະສິກຳປ່າໄມ້ ແລະ ພັດທະນາຊົນນະບົດ;
13. ສຶກສາ ແລະ ທົດລອງ ນຳໃຊ້ເຕັກໂນໂລຊີດີຈີຕອນ ເຂົ້າໃນການຄຸ້ມຄອງ ແລະ ຍົກຜະລິດຕະພາບລະບົບການຜະລິດກະສິກຳ ໃນການຫັນໄປສູ່ທັນສະໄໝ ໂດຍສະເພາະຮູບແບບສະມາດຟາມ (Smart Farm);
14. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການ, ງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ພາຍໃຕ້ຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍວາງອອກໃນແຕ່ລະໄລຍະ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃຫ້ໄດ້ຜົນສຳເລັດເປັນຢ່າງດີ;
15. ຮ່ວມກັບກົມກ່ຽວຂ້ອງ, ສະຖາບັນການສຶກສາ, ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນ ເພື່ອກໍ່ສ້າງ ແລະ ບຳລຸງຍົກລະດັບນັກຄົ້ນຄວ້າລະດັບປະລິນຍາໂທຂຶ້ນໄປ, ວິຊາການສະເພາະດ້ານ ໃຫ້ມີຄວາມຮູ້ ແລະ ຄວາມສາມາດພຽງພໍ;
16. ປະສານສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;
17. ຄົ້ນຄວ້ານຳສະເໜີ ການປັບປຸງກົງຈັກການຈັດຕັ້ງພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ກຳນົດແຜນກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ-ລັດຖະກອນ, ຄຸ້ມຄອງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕ່າງໆໃຫ້ແກ່ພະນັກງານ-ລັດຖະກອນ ຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້;
18. ສ້າງ, ນຳສະເໜີແຜນງົບປະມານ, ແຜນການລົງທຶນ 5 ປີ, ແຜນການປີ ພ້ອມທັງຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດຂອງ ພະແນກ, ບັນດາສູນຄົ້ນຄວ້າທີ່ຂຶ້ນກັບຕົນ ຕາມລະບຽບຫຼັກການ;
19. ພົວພັນຮ່ວມມື, ຂົນຂວາຍແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມຄວາມອາດສາມາດ ແລະ ຮັບໃຊ້ການຈັດຕັ້ງປະຕິບັດ ແຜນຍຸດທະສາດຂອງຕົນ ໃຫ້ໄດ້ຮັບຜົນຕາມຄາດໝາຍທີ່ວາງໄວ້;
20. ປະກອບສ່ວນເຂົ້າໃນການພັດທະນາ ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມເຂັ້ມແຂງ; ຫັນກິດຈະກຳໂຄງການ, ງົບປະມານ, ເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ລົງສູ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;
21. ສະຫຼຸບ, ລາຍງານ ວຽກງານຂອງຕົນ ໃຫ້ລັດຖະມົນຕີ ຊາບ ແລະ ເພື່ອຊີ້ນຳ;
22. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີສິດດັ່ງນີ້:

1. ນຳສະເໜີ ຮ່າງຍຸດທະສາດ, ແຜນງານ, ແຜນການ, ໂຄງການ ຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງສະຖາບັນ ແລະ ສູນຄົ້ນຄວ້າ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ; ຄົ້ນຄວ້າ ແລະ ນຳສະເໜີ ຮ່າງຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການຕ່າງໆ ກ່ຽວກັບຜົນການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອອກເປັນນິຕິກຳ;
2. ອອກຂໍ້ຕົກລົງ, ອອກແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ສູນຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານຄົ້ນຄວ້າ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຊີ້ນຳ, ຄຸ້ມຄອງດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດຕາມສາຍຕັ້ງໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;
4. ປະກອບເອກະສານຢັ້ງຢືນແນວພັນພືດ, ແນວພັນສັດ-ສັດນ້ຳ, ພັນປາ ແລະ ແນວພັນໄມ້ໃໝ່, ເຕັກນິກ ແລະ ເຕັກໂນໂລຊີໃໝ່ ເພື່ອສະເໜີສະພາວິທະຍາສາດຂອງກະຊວງຮັບຮອງ; ກຳນົດມາດຖານໂຮງງານ ແລະ ເຄື່ອງຄັດເມັດພັນ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດທີ່ຮັບໃຊ້ການຄົ້ນຄວ້າທົດລອງ ສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ບົນພື້ນຖານກົດໝາຍ ແລະ ລະບຽບການໃນແຕ່ລະໄລຍະ;
6. ວິໄຈ, ຢັ້ງຢືນຜົນການກວດກາຄຸນນະພາບຢາງພາລາ ແລະ ຜົດກະສິກຳເພື່ອນຳໃຊ້ພາຍໃນ ແລະ ສົ່ງອອກ;
7. ຄົ້ນຄວ້າ ແລະ ນຳສະເໜີນາມມະຍົດ ຂອງນັກຄົ້ນຄວ້າ, ຍ້ອງຍໍ, ປະຕິບັດນະໂຍບາຍອື່ນໆ, ຍົກຍ້າຍໜ້າທີ່ສັບຊ້ອນ, ຈັດວາງ, ປົດຕຳແໜ່ງ, ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
8. ພົວພັນຮ່ວມມື, ແລກປ່ຽນແນວພັນ, ບົດຮຽນ, ຂໍ້ມູນຂ່າວສານ ແລະ ຜົນສຳເລັດຂອງການຄົ້ນຄວ້າທົດລອງທີ່ກ້າວໜ້າຕໍ່ອົງການ ຫຼື ສະຖາບັນການສຶກສາ ທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ, ນັບທັງກໍ່ສ້າງພະນັກງານລະດັບປະລິນຍາໂທຂຶ້ນໄປ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ໄດ້ຕົກລົງຮ່ວມກັນ ຕາມການມອບໝາຍ ຂອງລັດຖະມົນຕີ;
9. ໃຫ້ບໍລິການວິຊາການ ແລະ ເປັນທີ່ປຶກສາ ໃນຂົງເຂດວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມກົດໝາຍລັດຖະກອນ;
10. ປະຕິບັດລະບອບການມອບເໝົາ, ມອບວຽກອີງຕາມຫົວຂໍ້ ການຄົ້ນຄວ້າວິທະຍາສາດ ຫຼື ໂຄງການຕ່າງໆ ໃຫ້ນັກຄົ້ນຄວ້າ ບົນພື້ນຖານການເຊັນສັນຍາຜູກພັນ ລະຫວ່າງ ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ນັກຄົ້ນຄວ້າ;
11. ສະເໜີ ປັບປຸງກົງຈັກການຈັດຕັ້ງຂອງຕົນ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ບັນດາກົງຈັກການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງສະຖາບັນ ຕາມການແບ່ງຂັ້ນຄຸ້ມຄອງ, ການກຳນົດຕຳແໜ່ງງານ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
12. ຮຽກໂຮມ ພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ປ່າ

ໄມ້, ກົນຈັກກະສິກຳ ແລະ ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;

13. ຄຸ້ມຄອງ, ຕິດຕາມ, ກວດກາ ປະເມີນຜົນ ແລະ ນຳໃຊ້ງົບປະມານ, ຊັບສິນຂອງລັດ, ການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;
14. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີໂຄງປະກອບກົງຈັກດັ່ງລຸ່ມນີ້:

1. ພະແນກບໍລິຫານ ແລະ ແຜນການ;
2. ສູນຄົ້ນຄວ້າເສດຖະກິດຊົນນະບົດ ແລະ ກະສິກຳຕໍ່ການປັບຕົວປ່ຽນແປງດິນຟ້າອາກາດ;
3. ສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ;
4. ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ;
5. ສູນຄົ້ນຄວ້າການລ້ຽງສັດ;
6. ສູນຄົ້ນຄວ້າການປະມົງ;
7. ສູນຄົ້ນຄວ້າປ່າໄມ້;
8. ສູນຂໍ້ມູນຂ່າວສານກະສິກຳ ແລະ ປ່າໄມ້;
9. ສູນວິໄຈຢາງພາລາ ແລະ ພືດກະສິກຳລາວ ຮ່ວມມືລາວ-ຈີນ (ຢຸນນານ);
10. ສູນທົດລອງແນວພັນພືດທີ່ດີ ຮ່ວມມືລາວ-ຈີນ (ກວາງຊີ);
11. ສູນຄົ້ນຄວ້າກະສິກຳ (ຫຼວງນ້ຳທາ);
12. ສູນຄົ້ນຄວ້າກະສິກຳເຂດເນີນສູງ (ຫຼວງພະບາງ);
13. ສູນຄົ້ນຄວ້າກະສິກຳ ທ່າຊະໂນ (ສະຫວັນນະເຂດ);
14. ສູນຄົ້ນຄວ້າກະສິກຳ ພາກໃຕ້ (ຈຳປາສັກ).

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີໂຄງປະກອບບຸກຄະລາກອນດັ່ງນີ້:

1. ຫົວໜ້າສະຖາບັນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດວຽກງານ ຂອງຕົນ;

   ໃນເວລາຫົວໜ້າສະຖາບັນ ຕິດຂັດຕ້ອງມອບສິດໃຫ້ ຮອງຫົວໜ້າສະຖາບັນ ທ່ານໃດໜຶ່ງຮັກສາການແທນ.
2. ຮອງຫົວໜ້າສະຖາບັນຈຳນວນໜຶ່ງ ຊ່ວຍຫົວໜ້າສະຖາບັນ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າສະຖາບັນ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງຂອງວຽກງານທີ່ຕົນຊີ້ນຳ;

ຮອງຫົວໜ້າສະຖາບັນ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າສະຖາບັນ ພາຍຫຼັງກັບມາປະຈໍາການ.

3. ຫົວໜ້າພະແນກ, ຫົວໜ້າສູນ, ຮອງຫົວໜ້າພະແນກ, ຮອງຫົວໜ້າສູນ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມຕໍາແໜ່ງງານ.

ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງພະແນກ ແລະ ສູນ

### ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ ແລະ ແຜນການ

ພະແນກບໍລິຫານ ແລະ ແຜນການ ມີໜ້າທີ່ດັ່ງນີ້:

1. ເປັນໃຈກາງປະສານໃນການສ້າງຍຸດທະສາດຕາມບູລິມະສິດ, ສັງລວມແຜນການ ແລະ ແຜນງົບປະມານ 5 ປີ, ປະຈໍາປີ ແລະ ປະຈໍາງວດ ຈາກພະແນກ, ບັນດາສູນຄົ້ນຄວ້າ, ແຜນງານ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບສະຖາບັນ ໃຫ້ເປັນແຜນການລວມ ຂອງສະຖາບັນ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ ແລະ ອະນຸມັດ;
2. ຄົ້ນຄວ້າ, ກວດກາ ແລະ ກັ່ນກອງບົດສະເໜີໂຄງການຄົ້ນຄວ້າທົດລອງ ແລະ ແຜນງົບປະມານ ຂອງພະແນກ, ບັນດາສູນ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບສະຖາບັນ; ສັງລວມຜົນຂອງການຄົ້ນຄວ້າ ແລະ ກໍານົດໝາຍເຕັກນິກ ເພື່ອນໍາສະເໜີຕໍ່ກອງປະຊຸມສະພາວິທະຍາສາດ ຂອງກະຊວງ ເພື່ອຮັບຮອງ ແລະ ເຜີຍແຜ່ອອກສູ່ວົງກວ້າງ;
3. ຄົ້ນຄວ້າ, ສັບຊ້ອນ, ຄຸ້ມຄອງ, ນໍາໃຊ້ ແລະ ສະເໜີແຜນກໍ່ສ້າງ, ບໍາລຸງພະນັກງານ ແລະ ຕິດຕາມ ພ້ອມທັງປັບປຸງແບບແຜນວິທີເຮັດວຽກ ແລະ ກົນໄກການເຄື່ອນໄຫວວຽກງານ ພາຍໃນສະຖາບັນ;
4. ປະສານສົມທົບກັບ ຫ້ອງການ, ບັນດາກົມ ແລະ ບັນດາອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍເພື່ອການຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ແລະ ຜົນຂອງການຄົ້ນຄວ້າ;
5. ປະສານສົມທົບກັບ ຫ້ອງການ ແລະ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ກະຊວງກ່ຽວຂ້ອງ ກ່ຽວກັບວຽກງານການເງິນ; ຕິດຕໍ່ພົວພັນກັບພາກສ່ວນກ່ຽວຂ້ອງຕາມການມອບໝາຍ ເພື່ອອໍານວຍຄວາມສະດວກໃຫ້ແກ່ ບັນດາສູນຄົ້ນຄວ້າ ກ່ຽວກັບວຽກງານບໍລິຫານ ແລະ ຈັດຕັ້ງ;
6. ຮັບຜິດຊອບວຽກງານຄຸ້ມຄອງເອກະສານຂາເຂົ້າ-ຂາອອກ, ການຈໍລະຈອນເອກະສານ, ວຽກງານສໍາເນົາ ແລະ ສາລະບັນເອກະສານ, ວຽກງານເລຂານຸການ ແລະ ພິທີການຂອງສະຖາບັນ;
7. ພັດທະນາ ແລະ ສົ່ງເສີມວຽກຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ, ບົດບາດຍິງ-ຊາຍ ແລະ ຄວາມສະເໝີພາບໃນສັງຄົມ;
8. ຄຸ້ມຄອງບັນຊີຊັບສິນຂອງລັດ ເຊັ່ນ: ທີ່ດິນ, ສິ່ງປຸກສ້າງ, ພາຫະນະ, ອຸປະກອນ, ກົນຈັກ ແລະ ເຄື່ອງມືຮັບໃຊ້ວິຊາສະເພາະ ຂອງບັນດາສູນ ແລະ ໂຄງການພາຍໃນສະຖາບັນ;
9. ເປັນໃຈກາງ ປະສານງານ, ສະຫຼຸບ, ລາຍງານ ວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງກົມ;
10. ຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ, ກວດກາລວມສູນກ່ຽວກັບ ລາຍຮັບ-ລາຍຈ່າຍງົບປະມານລັດ ແລະ ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ຖືກຕາມຂັ້ນຕອນ ແລະ ລະບຽບຫຼັກການ ຂອງກະຊວງການເງິນ ວາງອອກ.

**ມາດຕາ 8 ໜ້າທີ່ ຂອງສູນຄົ້ນຄວ້າເສດຖະກິດຊົນນະບົດ ແລະ ກະສິກຳຕໍ່ການປັບຕົວປ່ຽນແປງດິນຟ້າອາກາດ**

ສູນຄົ້ນຄວ້າເສດຖະກິດຊົນນະບົດ ແລະ ກະສິກຳຕໍ່ການປັບຕົວປ່ຽນແປງດິນຟ້າອາກາດ ມີໜ້າທີ່ດັ່ງນີ້:

1. ສຶກສາຄົ້ນຄວ້າ ກ່ຽວກັບເສດຖະກິດການຜະລິດ, ລະບົບຕ່ອງໂສ້ມູນຄ່າ ແລະ ການຕະຫຼາດຜະລິດຕະພັນ ເພື່ອສະໜອງຂໍ້ມູນໃນການພັດທະນາເສດຖະກິດ ແລະ ເພີ່ມລາຍຮັບຂອງຊາວກະສິກອນ;
2. ວິເຄາະທ່າອ່ຽງເສດຖະກິດຂອງພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງກັບການຂະຫຍາຍຕົວຂອງວຽກງານການພັດທະນາ ເສດຖະກິດ-ສັງຄົມຊົນນະບົດ ໃນແຕ່ລະໄລຍະ;
3. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;
4. ສຶກສາຄົ້ນຄວ້າກ່ຽວກັບ ວິວັດທະນາການດຳລົງຊີວິດຂອງສັງຄົມຊົນນະບົດ ເພື່ອກຳນົດຮູບແບບ ແລະ ມາດຕະຖານການພັດທະນາຊົນນະບົດໃໝ່ ທີ່ເໝາະສົມກັບສະພາບເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນ;
5. ນຳໃຊ້ເຄື່ອງມື ເປັນຕົ້ນແມ່ນ ແບບຈຳລອງ, ພາບຖ່າຍທາງອາກາດ ເພື່ອສຶກສາ ແລະ ພັດທະນາຮູບແບບການຜະລິດທີ່ເໝາະສົມ ພາຍໃຕ້ການປ່ຽນແປງດິນຟ້າອາກາດ ລວມທັງສ້າງເປັນແຜນທີ່ກຳນົດເຂດທີ່ມີຄວາມສ່ຽງຕໍ່ກັບການເກີດໄພແຫ້ງແລ້ງ, ນ້ຳຖ້ວມ, ການລະບາດຂອງພະຍາດສັດ, ສັດຕູພືດ ແລະ ອື່ນໆ ເພື່ອຄ້ຳປະກັນໄດ້ທາງດ້ານສະບຽງອາຫານ, ຜະລິດເປັນສິນຄ້າ ແລະ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ໃຫ້ຍືນຍົງ;
6. ໃຫ້ຄຳແນະນຳທາງດ້ານດິນຟ້າອາກາດ (ອຸຕຸກະສິກຳ) ລວມທັງເຕັກນິກວິຊາການຕ່າງໆ ເພື່ອຊ່ວຍໃຫ້ຊາວກະສິກອນສາມາດຕັດສິນໃຈເຂົ້າໃນການຜະລິດໄດ້ຢ່າງມີປະສິດທິຜົນ;
7. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການຊອກຫາມາດຕະການ ແລະ ວິທີການຈັດການກັບຄວາມສ່ຽງ ທີ່ຄາດວ່າຈະມີຜົນກະທົບຕໍ່ການຜະລິດກະສິກຳຕໍ່ການປ່ຽນແປງດິນຟ້າອາກາດ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;
8. ພັດທະນາ ແລະ ສ້າງລະບົບຖານຂໍ້ມູນການປ່ຽນແປງດິນຟ້າອາກາດຕໍ່ວຽກງານກະສິກຳ, ຂ່າວສານດ້ານວິທະຍາສາດ, ຜົນຂອງການຄົ້ນຄວ້າທົດລອງ, ເຕັກໂນໂລຊີ ກ່ຽວກັບການປັບຕົວທັງພາຍໃນ ແລະ ຂໍ້ມູນສາກົນ ທີ່ມີຜົນປະໂຫຍດ ແລະ ສາມາດນຳມາປັບໃຊ້ເຂົ້າໃນວຽກງານຂອງກະສິກຳ ແລະ ປ່າໄມ້ ໃນ ສປປ ລາວ.

**ມາດຕາ 9 ໜ້າທີ່ ຂອງສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ**

ສູນຄົ້ນຄວ້າເຂົ້າ ແລະ ພືດເສດຖະກິດ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາໃນການນຳໃຊ້ ຊີວະນາງພັນພືດ ທີ່ເປັນທ່າແຮງ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;
2. ຄົ້ນຄວ້າ ແລະ ພັດທະນາແນວພັນເຂົ້າ, ສາລີ ແລະ ພືດເສດຖະກິດໃໝ່; ຜະລິດ ແລະ ຂະຫຍາຍເມັດພັນເຂົ້າ ບໍລິສຸດ, ລຸ້ນ 1 ແລະ ລຸ້ນ 2 ເພື່ອສະໜອງໃຫ້ຂະແໜງການ/ສູນເຄືອຂ່າຍ, ກຸ່ມຜະລິດເມັດພັນ, ທ່ອນພັນ ແລະ ຮ່ວມກັບຜູ້ປະກອບການ ເພື່ອນຳໄປຜະລິດແນວພັນສົ່ງເສີມ ພ້ອມທັງຜະລິດ ແລະ ຂະ

ຂະຫຍາຍແນວພັນເຂົ້າລຸ້ນ 3 ຫຼື ແນວພັນສົ່ງເສີມ ຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນໍາເຂົ້າ ຕາມລາຍການພືດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;

3. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້, ບັນດາພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການກໍານົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສໍາເລັດຂອງການຄົ້ນຄວ້າທົດລອງ ກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ການຜະລິດຢ່າງກວ້າງຂວາງ;
4. ຄົ້ນຄວ້າ ເຕັກນິກການປູກເຂົ້າ, ສາລີ, ແລະ ພືດເສດຖະກິດ, ເຕັກນິກການຂະຫຍາຍພັນພືດດ້ວຍເນື້ອເຍື່ອ, ເຕັກນິກການປ້ອງກັນພະຍາດ ແລະ ແມງໄມ້ສັດຕູພືດ, ກວດສອບຄຸນນະພາບແນວພັນ, ເມັດພັນ ແລະ ທ່ອນພັນ;
5. ຄົ້ນຄວ້າ ການນໍາໃຊ້ເຄື່ອງມືກົນຈັກກະສິກໍາ ແລະ ເຕັກໂນໂລຊີຫຼັງເກັບກ່ຽວ ໃຫ້ແກ່ຊາວກະສິກອນ ແລະ ຜູ້ປະກອບການ;
6. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ຫຸ້ມຫໍ່ເມັດພັນ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດ ແລະ ທະນາຄານເຊື້ອພັນໃຫ້ມີຄວາມຍືນຍົງ.

**ມາດຕາ 10 ໜ້າທີ່ ຂອງສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ**

ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ ມີໜ້າທີ່ດັ່ງນີ້:

1. ສໍາຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາການນໍາໃຊ້ຊີວະນາໆພັນພືດຜັກ ແລະ ໄມ້ໃຫ້ໝາກ ທີ່ເປັນທ່າແຮງ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ ພັດທະນາ ແລະ ນໍາໃຊ້ໃຫ້ມີຄວາມຍືນຍົງ;
2. ເປັນໃຈກາງໃນການສຶກສາ, ຄົ້ນຄວ້າ, ປັບປຸງ ແລະ ຂະຫຍາຍແນວພັນຜັກ, ໄມ້ໃຫ້ໝາກ ແລະ ໄມ້ປະດັບ, ທີ່ເໝາະສົມ ແລະ ສາມາດປັບຕົວຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ໃນລະດັບສູນກາງ ແລະ ສົມທົບກັບ ສູນເຄືອຂ່າຍໃນລະດັບທ້ອງຖິ່ນ ໃນຂອບເຂດທົ່ວປະເທດ; ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນສົ່ງເສີມຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນໍາເຂົ້າ ຕາມລາຍການພືດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
3. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້, ບັນດາພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍ ໃນການກໍານົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສໍາເລັດ ຂອງການຄົ້ນຄວ້າທົດລອງກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ການຜະລິດຢ່າງກວ້າງຂວາງ;
4. ຄົ້ນຄວ້າ ຮູບແບບການຜະລິດກະສິກໍາສະອາດ, ຫຼຸດຜ່ອນການນໍາໃຊ້ສານເຄມີ, ເຕັກນິກການປ້ອງກັນພະຍາດ ແລະ ແມງໄມ້ສັດຕູພືດ ແລະ ເຕັກໂນໂລຊີຫຼັງການເກັບກ່ຽວ;
5. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ຫຸ້ມຫໍ່ເມັດພັນ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດ ແລະ ທະນາຄານເຊື້ອພັນໃຫ້ມີຄວາມຍືນຍົງ.

**ມາດຕາ 11 ໜ້າທີ່ ຂອງສູນຄົ້ນຄວ້າການລ້ຽງສັດ**

ສູນຄົ້ນຄວ້າການລ້ຽງສັດ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາການນຳໃຊ້ຊີວະນາໆພັນສັດ ແລະ ພືດອາຫານສັດ ເພື່ອພັດທະນາ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;
2. ຄົ້ນຄວ້າ, ປັບປຸງ, ຄັດເລືອກ, ຜະລິດ ແລະ ຂະຫຍາຍແນວພັນສັດ (ງົວ, ໝູ, ແບ້, ສັດປີກ) ແລະ ແນວພັນພືດອາຫານສັດ ເພື່ອຍົກຜະລິດຕະພາບ ແລະ ສາມາດປັບຕົວຕໍ່ກັບການປ່ຽນແປງ ຂອງສະພາບດິນຟ້າອາກາດ, ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນສົ່ງເສີມ ຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການສັດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງ ແລະ ບໍລິການໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
3. ປະສານສົມທົບກັບກົມກ່ຽວຂ້ອງ, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ຕາມການມອບໝາຍ ເພື່ອຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງ ອອກສູ່ການຜະລິດຢ່າງກວ້າງຂວາງ;
4. ຄົ້ນຄວ້າລະບົບ, ຮູບແບບ, ເຕັກໂນໂລຊີ ແລະ ວິທີການຜະລິດທີ່ມີປະສິດທິພາບ, ປະສິດທິຜົນສູງ ໂດຍປະສານສົມທົບກັບບັນດາສູນ, ສະຖານີ ແລະ ໂຮງຮຽນຊາວນາຂອງແຕ່ລະທ້ອງຖິ່ນ ເພື່ອຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງອອກສູ່ຊົນນະບົດ ຢ່າງກວ້າງຂວາງ;
5. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ຄຸ້ມຄອງເຄື່ອງຈັກປຸງແຕ່ງ, ກວດກາຄຸນນະພາບ ແລະ ການຫຸ້ມຫໍ່ເມັດພັນພືດອາຫານສັດ ໃນຂອບເຂດຂອງຕົນ;
6. ຄຸ້ມຄອງການວິໄຈ ແລະ ການຜະລິດຫຼອດນ້ຳເຊື້ອແຊ່ແຂງຂອງສັດ, ກວດກາຄຸນນະພາບ ແລະ ມາດຕະການໃນການນຳໃຊ້ສຳລັບການປະສົມພັນທຽມສັດ.

**ມາດຕາ 12 ໜ້າທີ່ ຂອງສູນຄົ້ນຄວ້າການປະມົງ**

ສູນຄົ້ນຄວ້າການປະມົງ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາການນຳໃຊ້ຊີວະນາໆພັນປາ ແລະ ສັດນ້ຳ ເພື່ອພັດທະນາ, ຄຸ້ມຄອງ-ນຳໃຊ້ ແລະ ປົກປັກຮັກສາໃຫ້ມີຄວາມຍືນຍົງ;
2. ສຶກສາຄົ້ນຄວ້າ, ຂະຫຍາຍແນວພັນປາ ແລະ ສັດນ້ຳທີ່ເປັນບູລິມະສິດ ເພື່ອຍົກຜະລິດຕະພາບ ແລະ ສາມາດປັບຕົວ ເຂົ້າກັບການປ່ຽນແປງຂອງສະພາບອາກາດ, ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນສົ່ງເສີມຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການປາ ແລະ ສັດນ້ຳ ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງ ແລະ ບໍລິການໃຫ້ຂະແໜງສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
3. ສຶກສາ, ຄົ້ນຄວ້າດ້ານອາຫານ ແລະ ສຸຂະພາບຂອງປາ ແລະ ສັດນ້ຳ;
4. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມມມການມອບໝາຍ ໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;

5. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ຄຸ້ມຄອງຫ້ອງວິໄຈ, ເຄື່ອງຈັກປຸງແຕ່ງອາຫານປາ ແລະ ຜະລິດຕະພັນປາ ແລະ ສັດນ້ຳໃນຂອບເຂດຂອງຕົນ;
6. ສັງລວມ, ເຜີຍແຜ່ ແລະ ບໍລິການຂໍ້ມູນຂ່າວສານ ການຄົ້ນຄວ້າທົດລອງດ້ານການປະມົງ ໃນລະດັບຊາດ ແລະ ພາກພື້ນ ເພື່ອສະໜອງຂໍ້ມູນໃຫ້ແກ່ການວາງແຜນພັດທະນາ ແລະ ຄຸ້ມຄອງການປະມົງໃຫ້ມີຄວາມຍືນຍົງ.

**ມາດຕາ 13 ໜ້າທີ່ ຂອງສູນຄົ້ນຄວ້າປ່າໄມ້**

ສູນຄົ້ນຄວ້າປ່າໄມ້ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ອະນຸລັກ ສຶກສາ ແລະ ຕີລາຄາການນຳໃຊ້ຊີວະນາໆພັນໄມ້ ແລະ ເຄື່ອງປ່າຂອງດົງ, ພ້ອມທັງປັບປຸງ ແລະ ພັດທະນາຖານຂໍ້ມູນລາຍຊື່ຊະນິດພັນ; ສ້າງສວນແຫຼ່ງແກ່ນພັນໄມ້, ຄັດເລືອກພໍ່-ແມ່ ພັນໄມ້ພື້ນເມືອງ ທີ່ເປັນບຸລິມະສິດ, ຫາຍາກ, ໃກ້ຈະສູນພັນ ແລະ ພັນໄມ້ນຳເຂົ້າຈາກຕ່າງປະເທດ ທີ່ມີທ່າແຮງທາງດ້ານເສດຖະກິດ;
2. ຄົ້ນຄວ້າ ນຳໃຊ້ບັນດາເຕັກໂນໂລຊີການຜະລິດທີ່ມີປະສິດທິຜົນສູງ ກ່ຽວກັບການຂະຫຍາຍແນວພັນໄມ້ ການປູກໄມ້ ແລະ ພືດປະເພດເຄື່ອງປ່າຂອງດົງລວມທັງຫວາຍ ແລະ ໄມ້ປ່ອງ, ພືດໃຫ້ນ້ຳມັນທີ່ເປັນອາຫານ ແລະ ພະລັງງານທົດແທນ, ການຈັດສັນປ່າປູກ, ປ່າທຳມະຊາດ ແລະ ການຟື້ນຟູປ່າ;
3. ສຶກສາ ຄົ້ນຄວ້າ ແລະ ນຳໃຊ້ເຕັກນິກເຕັກໂນໂລຊີ ການຜະລິດທີ່ມີປະສິດທິຜົນສູງ ກ່ຽວກັບການຂະຫຍາຍແນວພັນໄມ້ ພືດປະເພດເຄື່ອງປ່າຂອງດົງ ເພື່ອກຳນົດເຕັກນິກໃນການຈັດສັນປ່າປູກ, ການປູກໄມ້ ແລະ ຈັດສັນປ່າທຳມະຊາດ ແລະ ການຟື້ນຟູປ່າ;
4. ສຶກສາຄົ້ນຄວ້າ, ສຳຫຼວດ, ອອກແບບ ແລະ ວາງແຜນນຳໃຊ້ພື້ນທີ່ສຳລັບການຜະລິດກະສິກຳປ່າໄມ້-ແບບປະສົມປະສານຕາມພູມີທັດ ທີ່ຮັບປະກັນຜົນຜະລິດ ແລະ ຄວາມສົມດຸນທາງດ້ານນິເວດວິທະຍາ ແລະ ສິ່ງແວດລ້ອມ;
5. ສຶກສາກ່ຽວກັບລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມຂອງປ່າໄມ້, ຮູບແບບການຈັດສັນຄຸ້ມຄອງ ແລະ ນຳໃຊ້ປະໂຫຍດປ່າ, ຕົ້ນໄມ້ ແລະ ຜະລິດຕະພັນໄມ້ ເພື່ອການປັບຕົວຕໍ່ກັບການປ່ຽນແປງຂອງດິນ, ຟ້າອາກາດ;
6. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ການຜະລິດຢ່າງກວ້າງຂວາງ;
7. ສຶກສາຕ່ອງໂສ້ມູນຄ່າໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນຂໍ້ມູນໃຫ້ແກ່ການວາງແຜນນຳໃຊ້, ຄຸ້ມຄອງ ແລະ ພັດທະນາປ່າໄມ້;
8. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນໄມ້, ຄຸ້ມຄອງເຄື່ອງຈັກການປຸງແຕ່ງຜະລິດຕະພັນໄມ້ທີ່ຮັບໃຊ້ໃນການທົດລອງ, ສາງ ແລະ ຫໍພິພິດຕະພັນ ຈາກຕົວຢ່າງໄມ້ ທີ່ສຶກສາ ແລະ ສຳຫຼວດ.

**ມາດຕາ 14 ໜ້າທີ່ ຂອງສູນຂໍ້ມູນຂ່າວສານກະສິກຳ, ປ່າໄມ້**

ສູນຂໍ້ມູນຂ່າວສານກະສິກຳ, ປ່າໄມ້ ມີໜ້າທີ່ດັ່ງນີ້:

1. ສ້າງ ແລະ ພັດທະນາລະບົບກົນໄກ ໃນການເກັບກຳ, ສັງລວມ, ແລກປ່ຽນຂໍ້ມູນຂ່າວສານ ເພື່ອຄຸ້ມຄອງລະບົບຂໍ້ມູນຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອຕອບສະໜອງ ແລະ ບໍລິການ ຢ່າງເປັນລະບົບລວມສູນ ແລະ ມີປະສິດທິຜົນໃນການນຳໃຊ້ ແລະ ບໍລິການທັງພາຍໃນ ແລະ ຕ່າງປະເທດ;

2. ຜະລິດສື່ໂຄສະນາດ້ວຍຮູບການຕ່າງໆ, ເຜີຍແຜ່ຜົນການຄົ້ນຄວ້າທົດລອງກະສິກຳ ແລະ ປ່າໄມ້ ຢ່າງກວ້າງຂວາງ ຜ່ານບັນດາສື່ໂຄສະນາ ທີ່ທັນສະໄໝ ແລະ ເຂົ້າເຖິງໄດ້ງ່າຍ;
3. ພັດທະນາ ແລະ ປັບປຸງຮູບແບບລະບົບໄອຊີທີຕ່າງໆ ຕະຫຼອດຮອດບັນດາເຄື່ອງມື ເຕັກໂນໂລຊີດີຈິຕອນຕ່າງໆ ເພື່ອຮັບໃຊ້ເຂົ້າໃນວຽກງານການພັດທະນາກະສິກຳ ແລະ ປ່າໄມ້ເຊັ່ນ: ລະບົບຖານຂໍ້ມູນທາງດ້ານເອກະສານ, ຖານຂໍ້ມູນທາງດ້ານເວັບໄຊ, ແອັບພິເຄຊັນທາງມືຖື ເປັນຕົ້ນ;
4. ທົດລອງ ແລະ ພັດທະນາ ບັນດາລະບົບເຕັກໂນໂລຊີດີຈິຕອນ ເຂົ້າໃນການຜະລິດກະສິກຳ ເພື່ອກ້າວໄປສູ່ທັນສະໄໝໂດຍນຳໃຊ້ ເຄື່ອງມືໄອຊີທີເພື່ອເປັນຕົວແບບໃນການຮຽນຮູ້ຂອງສັງຄົມ;
5. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະພາກສ່ວນກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານ ແລະ ເຜີຍແຜ່ຂໍ້ມູນທີ່ໄດ້ຈາກຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;
6. ຝຶກອົບຮົມດ້ານວິຊາການໃຫ້ແກ່ພາກສ່ວນຕ່າງໆ ໃນການພັດທະນາລະບົບວຽກງານຂໍ້ມູນຂ່າວສານ ແລະການສື່ສານເຕັກໂນໂລຊີໄອຊີທີ, ການຄຸ້ມຄອງຂໍ້ມູນຂ່າວສານສາມາດເຊື່ອມໂຍງກັນໄດ້ ໃນຂອບເຂດທົ່ວກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງກ່ຽວຂ້ອງ.

**ມາດຕາ 15 ໜ້າທີ່ ຂອງສູນວິໄຈຢາງພາລາ ແລະ ພືດກະສິກຳລາວ ຮ່ວມມື ລາວ-ຈີນ (ຢຸນນານ)**

ສູນວິໄຈຢາງພາລາລາວ ແລະ ພືດກະສິກຳລາວ ຮ່ວມມື ລາວ-ຈີນ (ຢຸນນານ) ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ຈັດສັນ, ເຕົ້າໂຮມລະບົບນິເວດວິທະຍາ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ແນວພັນຢາງພາລາ ແລະ ພືດກະສິກຳ ທີ່ເປັນທ່າແຮງດ້ານເສດຖະກິດ;
2. ຄົ້ນຄວ້າ ນຳໃຊ້ບັນດາເຕັກນິກ, ເຕັກໂນໂລຊີ, ມາດຕະຖານ ແລະ ລະບົບການຜະລິດທີ່ມີປະສິດທິຜົນສູງກ່ຽວກັບການຜະລິດແນວພັນ, ການແປຮູບ, ການປູກ, ການປ້ອງກັນພະຍາດ ແລະ ແມງໄມ້ທຳລາຍຕົ້ນຢາງພາລາ ແລະ ພືດກະສິກຳ.
3. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ;
4. ວິເຄາະວິໄຈ ແລະ ຢັ້ງຢືນຄຸນນະພາບຢາງພາລາ ແລະ ພືດກະສິກຳ;
5. ຄຸ້ມຄອງການຄົ້ນຄວ້າການວິໄຈ ແລະ ການຜະລິດແນວພັນ, ຄຸ້ມຄອງຫ້ອງວິໄຈ ແລະ ອຸປະກອນ, ເຄື່ອງຈັກປຸງແຕ່ງ, ເຄື່ອງຫຸ້ມຫໍ່ຜະລິດຕະພັນຢາງພາລາ ແລະ ພືດກະສິກຳ.

**ມາດຕາ 16 ໜ້າທີ່ ຂອງສູນທົດລອງແນວພັນພືດທີ່ດີ ຮ່ວມມື ລາວ-ຈີນ (ກວາງຊີ)**

ສູນທົດລອງແນວພັນພືດທີ່ດີ ຮ່ວມມືລາວ-ຈີນ (ກວາງຊີ)

1. ຄົ້ນຄວ້າ ນຳໃຊ້ບັນດາເຕັກນິກ, ເຕັກໂນໂລຊີ, ມາດຕະຖານ ແລະ ລະບົບການຜະລິດທີ່ມີປະສິດທິຜົນສູງກ່ຽວກັບການຜະລິດແນວພັນໄມ້ໃຫ້ໝາກ: ໝາກມັງກອນ, ແຄນຕາລຸບ ແລະ ພືດອື່ນໆ ທີ່ມີທ່າແຮງທາງດ້ານເສດຖະກິດ, ເຕັກນິກການປູກ, ການປ້ອງກັນພະຍາດ ແລະ ແມງໄມ້ທຳລາຍ;
2. ເພີ່ມມູນຄ່າຜົນຜະລິດ ໂດຍການປຸງແຕ່ງຜະລິດຕະພັນກະສິກຳ, ພັດທະນາແນວພັນໃໝ່ ທີ່ມີຄຸນນະພາບ;

3. ຄຸ້ມຄອງການຄົ້ນຄວ້າ, ການຜະລິດແນວພັນ, ການປຸງແຕ່ງ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດ;
4. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ, ບັນດາພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຕາມການມອບໝາຍໃນການກຳນົດຫົວຂໍ້ ການຄົ້ນຄວ້າແນວພັນພືດທີ່ມີທ່າແຮງທາງດ້ານເສດຖະກິດ ແລະ ຜັນຂະຫຍາຍຜົນສຳເລັດ ຂອງການຄົ້ນຄວ້າທົດລອງກະສິກຳ ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ.

## ມາດຕາ 17 ໜ້າທີ່ ຂອງສູນຄົ້ນຄວ້າກະສິກຳ ແຂວງຫຼວງນ້ຳທາ

ສູນຄົ້ນຄວ້າກະສິກຳ ແຂວງຫຼວງນ້ຳທາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ພັດທະນາແນວພັນເຂົ້າ ແລະ ພືດເສດຖະກິດໃໝ່ທີ່ມີທ່າແຮງຜະລິດ ແລະ ຂະຫຍາຍເມັດພັນເຂົ້າ ບໍລິສຸດ, ລຸ້ນ 1 ແລະ ລຸ້ນ 2 ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນເຂົ້າ ລຸ້ນ 3 ຫຼື ແນວພັນສົ່ງເສີມຕາມທ່າແຮງຂອງຕົນ ທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການພືດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງ ແລະ ບໍລິການໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
2. ຄົ້ນຄວ້າເຕັກນິກການປູກ, ເຕັກນິກການປ້ອງກັນພະຍາດ ແລະ ແມງໄມ້ສັດຕູພືດຂອງເຂົ້າ ແລະ ພືດເສດຖະກິດ, ກວດສອບຄຸນນະພາບເມັດພັນ, ແນວພັນ ແລະ ເຕັກໂນໂລຊີຫຼັງການເກັບກ່ຽວ, ຄົ້ນຄວ້າການນຳໃຊ້ເຄື່ອງມືກົນຈັກກະສິກຳ;
3. ຄຸ້ມຄອງ ການຄົ້ນຄວ້າ ແລະ ການຜະລິດແນວພັນ, ການປຸງແຕ່ງ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດໃນຂອບເຂດຂອງຕົນ;
4. ປະສານສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ຕາມການມອບໝາຍ ໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ.

## ມາດຕາ 18 ໜ້າທີ່ ຂອງສູນຄົ້ນຄວ້າກະສິກຳເຂດເນີນສູງ

ສູນຄົ້ນຄວ້າກະສິກຳເຂດເນີນສູງ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາໃນການນຳໃຊ້ ຊີວະນາໆພັນພືດ ແລະ ສັດ ທີ່ເປັນທ່າແຮງ ເພື່ອຮັບໃຊ້ໃຫ້ແກ່ ການຄົ້ນຄວ້າ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;
2. ຄົ້ນຄວ້າ ແລະ ພັດທະນາແນວພັນເຂົ້າ ແລະ ແນວພັນພືດເນີນສູງໃໝ່ ທີ່ມີຜົນຜະລິດສູງ, ຄຸນນະພາບດີ ແລະ ປັບຕົວຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ; ຜະລິດ ແລະ ຂະຫຍາຍເມັດພັນເຂົ້າ ບໍລິສຸດ, ລຸ້ນ 1 ແລະ ລຸ້ນ 2 ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນເຂົ້າ ລຸ້ນ 3 ຫຼື ແນວພັນສົ່ງເສີມ ຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການພືດ ແລະ ສັດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດ

ແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;

3. ຄົ້ນຄວ້າ ເຕັກນິກການປູກ, ລະບົບການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳຄົງທີ່, ຄວາມຍືນຍົງ ແລະ ຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ;
4. ຄົ້ນຄວ້າ ການນຳໃຊ້ວິທະຍາສາດເຕັກນິກ, ເຄື່ອງມືກົນຈັກກະສິກຳ, ເຕັກໂນໂລຊີຫຼັງການເກັບກ່ຽວ, ຮູບແບບ ແລະ ວິທີການຜະລິດກະສິກຳ ທີ່ມີປະສິດທິພາບສູງ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
5. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ການປຸງແຕ່ງ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດໃນຂອບເຂດຂອງຕົນ;
6. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ຕາມການມອບໝາຍໃນການກຳນົດຫົວຂໍ້ ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງ ການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ.

### ມາດຕາ 19 ໜ້າທີ່ ຂອງສູນຄົ້ນຄວ້າກະສິກຳພາກໃຕ້

ສູນຄົ້ນຄວ້າກະສິກຳພາກໃຕ້ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາໃນການນຳໃຊ້ ຊີວະນາໆພັນເຂົ້າ, ກາເຟ ແລະ ພັນພືດເຂດໜາວ ທີ່ເປັນທ່າແຮງ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;
2. ຄົ້ນຄວ້າ ແລະ ພັດທະນາແນວພັນເຂົ້າ, ກາເຟ ແລະ ແນວພັນພືດເຂດໜາວໃໝ່ ທີ່ມີຜົນຜະລິດສູງ, ຄຸນນະພາບດີ ແລະ ປັບຕົວຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ; ຜະລິດ ແລະ ຂະຫຍາຍເມັດພັນເຂົ້າບໍລິສຸດ, ລຸ້ນ 1 ແລະ ລຸ້ນ 2 ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນເຂົ້າ ລຸ້ນ 3 ຫຼື ແນວພັນສົ່ງເສີມຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການພືດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
3. ຄົ້ນຄວ້າ ການນຳໃຊ້ວິທະຍາສາດເຕັກນິກ, ເຄື່ອງມືກົນຈັກກະສິກຳ, ເຕັກໂນໂລຊີຫຼັງການເກັບກ່ຽວ, ຮູບແບບ ແລະ ວິທີການຜະລິດກະສິກຳ ທີ່ມີປະສິດທິພາບສູງ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
4. ໃຫ້ບໍລິການທາງດ້ານວິຊາການ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ບົນພື້ນຖານເຊັນສັນຍາແບບມອບເໝົາ ແລະ ໄດ້ຮັບການເຫັນດີຈາກ ສະຖາບັນ;
5. ຄຸ້ມຄອງ ການຄົ້ນຄວ້າ ແລະ ການຜະລິດແນວພັນ, ການປຸງແຕ່ງ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດໃນຂອບເຂດຂອງຕົນ;
6. ປະສານສົມທົບກັບ ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ຕາມການມອບໝາຍ ໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ການຜະລິດຢ່າງກວ້າງຂວາງ.

**ມາດຕາ 20 ໜ້າທີ່ ຂອງສູນຄົ້ນຄວ້າກະສິກຳ ທ່າຊະໂນ**

ສູນຄົ້ນຄວ້າກະສິກຳ ທ່າຊະໂນ ມີໜ້າທີ່ດັ່ງນີ້:

1. ສຳຫຼວດ, ເຕົ້າໂຮມ, ສຶກສາ ແລະ ຕີລາຄາໃນການນຳໃຊ້ ຊີວະນາໆພັນເຂົ້າ ແລະ ພັນພືດ ທີ່ເປັນທ່າແຮງ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ, ທັງແນໃສ່ເພື່ອຍົກຜະລິດຕະພາບ ແລະ ປັບຕົວຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ;
2. ຄົ້ນຄວ້າ ແລະ ພັດທະນາແນວພັນເຂົ້າ ແລະ ພືດກະສິກຳໃໝ່ ທີ່ມີຜົນຜະລິດສູງ, ຄຸນນະພາບດີ ແລະ ປັບຕົວຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ; ຜະລິດ ແລະ ຂະຫຍາຍເມັດພັນເຂົ້າ ບໍລິສຸດ, ລຸ້ນ 1 ແລະ ລຸ້ນ 2 ພ້ອມທັງຜະລິດ ແລະ ຂະຫຍາຍແນວພັນລຸ້ນ 3 ຫຼື ແນວພັນສົ່ງເສີມ ຕາມທ່າແຮງຂອງຕົນທີ່ມີເງື່ອນໄຂດ້ວຍຮູບການຮ່ວມມືຕ່າງໆ ເພື່ອສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ຕາມລາຍການພືດ-ທີ່ສົ່ງເສີມຜະລິດຢູ່ພາຍໃນ ແລະ ລາຍການສິນຄ້າທີ່ມີສັນຍາ ມີຕະຫຼາດແລ້ວເພື່ອສົ່ງອອກ ແລະ ເພື່ອສະໜອງໃຫ້ຂະແໜງການສົ່ງເສີມ, ໂຄງການພັດທະນາ, ກຸ່ມຜະລິດ, ຜູ້ປະກອບການ ແລະ ຊາວກະສິກອນ;
3. ນຳໃຊ້ວິທະຍາສາດເຕັກນິກ, ເຄື່ອງມືກົນຈັກກະສິກຳ, ເຕັກໂນໂລຊີຫຼັງການເກັບກ່ຽວ, ຮູບແບບ ແລະ ວິທີການຜະລິດກະສິກຳ ທີ່ມີປະສິດທິພາບສູງ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ;
4. ໃຫ້ບໍລິການທາງດ້ານວິຊາການ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ບົນພື້ນຖານເຊັນສັນຍາແບບມອບເໝົາ ແລະ ໄດ້ຮັບການເຫັນດີຈາກ ສະຖາບັນ;
5. ຄຸ້ມຄອງການຄົ້ນຄວ້າ ແລະ ການຜະລິດແນວພັນ, ການປຸງແຕ່ງ ແລະ ຜະລິດເມັດພັນໃຫ້ໄດ້ຄຸນນະພາບ, ຄຸ້ມຄອງໂຮງງານ ແລະ ເຄື່ອງຄັດເມັດພັນ, ຄຸ້ມຄອງຫ້ອງທົດລອງ, ໂຮງອົບເມັດພັນພືດ, ສາງເຢັນເກັບເມັດພັນພືດໃນຂອບເຂດຂອງຕົນ;
6. ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ, ສູນບໍລິການເຕັກນິກ ແລະ ພາກສ່ວນເສດຖະກິດຕ່າງໆ ຕາມການມອບໝາຍ ໃນການກຳນົດຫົວຂໍ້ການຄົ້ນຄວ້າ ແລະ ຜັນຂະຫຍາຍຜົນສຳເລັດ ຂອງການຄົ້ນຄວ້າທົດລອງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ອອກສູ່ສັງຄົມຢ່າງກວ້າງຂວາງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 21 ຫຼັກການ**

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງສະຖາບັນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ປ່າໄມ້ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 22 ແບບແຜນວິທີເຮັດວຽກ**

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການແຕ່ລະໄລຍະ;
4. ຫົວໜ້າສະຖາບັນ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະພັກ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າສະຖາບັນ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍຂອງຫົວໜ້າສະຖາບັນ;
5. ຫົວໜ້າສະຖາບັນ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າສະຖາບັນຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າສະຖາບັນ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າສະຖາບັນຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດ ລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 23 ງົບປະມານ ແລະ ຕາປະທັບ**

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ສະບັບເລກທີ 3884/ກປ, ລົງວັນທີ 29 ສິງຫາ 2017.໗.໙

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ພ. ເພຍພ

ປອ. ເພັດ ພົມພິພັກ